# ການສຳຫຼວດພົນລະເມືອງ 101: ແມ່ນຫຍັງທີ່ເຈົ້າຄວນຮູ້

ການສຳຫຼວດພົນລະເມືອງ ປີ 2020 ຍັບເຂົ້າມາໃກ້ກວ່າທີ່ເຈົ້າຄິດ!
ມາທົບທວນກັນຄືນໃໝ່ວ່າການສຳຫຼວດພົນລະເມືອງແມ່ນຫຍັງ ແລະ ເປັນຫຍັງຈຶ່ງຈຳເປັນທີ່ຕ້ອງຈົດນັບທຸກຄົນ.

## ທຸກຄົນມີຄວາມສຳຄັນ.

ການສຳຫຼວດພົລະເມືອງຈົດນັບທຸກຄົນທີ່ອາໄສຢູ່ສະຫະລັດອາເມລິກາ. ຄັ້ງດຽວ, ເທື່ອດຽວເທົ່ານັ້ນ, ແລະ ຢູ່ບ່ອນທີ່ຖືກຕ້ອງ.



## ເພື່ອການເປັນຕົວແທນທີ່ຍຸດຕິທຳ.

ໃນທຸກໆ 10 ປີ, ຜົນຂອງການສຳຫຼວດພົນລະເມືອງຖືກນຳໃຊ້ເຂົ້າໃນການຈັດສັນສະພາຜູ້ແທນລັດສະດອນ, ກຳນົດຈຳນວນບ່ອນນັ່ງສຳລັບແຕ່ລະລັດ.






## ລະບຸໄວ້ໃນລັດຖະທຳມະນູນ.

ລັດຖະທຳມະນູນຂອງສະຫະລັດອາເມລິກາ ກຳນົດວ່າຕ້ອງໄດ້ມີການຈັດນັບທຸກໆຄົນ ຢູ່ໃນປະເທດ ໃນທຸກໆ 10 ປີ. ການສຳຫຼວດພົນລະເມືອງຄັ້ງທຳອິດແມ່ນໃນປີ 1790.

## ເພື່ອຈັດສັນງົບປະມານ $675 ຕື້.



## ກ່ຽວກັບການຈັດເຂດເລືອກຕັ້ງໃໝ່.

ຫຼັງຈາກການສຳຫຼວດພົນລະເມືອງໃນແຕ່ລະທົດສະຕະວັດ, ຫ້ອງການຂອງແຕ່ລະລັດ ໄດ້ແຕ້ມຄືນຂອບເຂດສຳລັບຕົວແທນສະພາ ແລະ ການປົກຄອງ ເພື່ອໃຫ້ແທດເໝາະກັບການປ່ຽນແປງຂອງປະຊາກອນ.



ການຈັດສັນງົບປະມານ, ທຶນ ແລະ ການສະໜັບສະໜູນຂອງລັດ ຈຳນວນ $675 ຕື້, ໃຫ່ແກ່ແຕ່ລະລັດ, ເຂດ ແລະ ຊຸມຊົນ ແມ່ນອີງໃສ່ຂໍ້ມູນການສຳຫຼວດພົນລະເມືອງ. ງົບປະມານ ແມ່ນຖືກນຳໃຊ້ສຳລັບໂຮງຮຽນ,ໂຮງໝໍ, ທົນທາງ, ໂຍທາແລະແຜນງານອື່ນທີ່ສຳຄັນ.



## ຮ່ວມມືແມ່ນໜ້າທີ່ຂອງພົນລະເມືອງ

ຕື່ມແບບຟອມສຳຫຼວດພົນລະເມືອງແມ່ນຂໍ້ບັງຄັບ: ສະແດງການມຮ່ວມໃນລະບອບປະຊາທິປະໄຕ ແລະ ບອກວ່າ "ຂ້ອຍມີຄວາມສຳຄັນ!"



# ຂໍ້ມູນການສຳຫຼວດພົນລະເມືອງແມ່ນຖືກນຳໃຊ້ຢູ່ອ້ອມຕົວເຈົ້າ.



ຂະແໜງທຸລະກິດ ນຳໃຊ້ຂໍ້ມູນການສຳຫຼວດພົນລະເມືອງ ເພື່ອກຳນົດວ່າຈະສ້າງໂຮງງານ, ຫ້ອງການ ແລະ ຫ້າງຮ້ານຢູ່ໃສ,ເຊິ່ງສ້າງວຽກເຮັດງານທຳ.






ລັດຖະບານທ້ອງຖິ່ນນຳໃຊ້ການສຳຫຼວດພົນລະເມືອງສຳລັບການຮັກສາຄວາມປອດໄພສາທາລະນະ ແລະການກະກຽມສຳລັບເຫດການສຸກເສີນ.



ຜູ້ຢູ່ອາໄສນຳໃຊ້ການສຳຫຼວດພົນລະເມືອງ ເພື່ອສະໜັບສະໜູນມາດຕະການຊຸມຊົນທີ່ພົວພັນກັບນິຕິກຳ,ຄຸນະພາບຊີວິດ ແລະ ສະໜັບສະໜູນຜູ້ບໍລິໂພກ.

ນັກພັດທະນາອະສັງຫາ ນຳໃຊ້ການສຳຫຼວດພົນລະເມືອງ ເພື່ອສ້າງອາຄານ ໃໝ່ ແລະຟື້ນຟູເຂດຊຸມຊົນຄືນໃໝ່.




## ປົກປ້ອງຄວາມລັບຂອງເຈົ້າ.

ອີງຕາມກົດໝາຍສູນການສຳຫຼວດບໍ່ສາມາດເຜີຍແຜ່ຄຳຕອບຂອງເຈົ້າໃນລັກສະນະທີ່ຈະສາມາດບົ່ງບອກວ່າເຈົ້າ ຫຼືຄົວເຮືອນຂອງເຈົ້າແມ່ນໃຜໄດ້.

ອີງຕາມກົດໝາຍ,ຄຳຕອບຂອງເຈົ້າບໍ່ສາມາດນຳໃຊ້ເພື່ອຕໍ່ຕ້ານ ເຈົ້າ ແລະສາມາດນຳໃຊ້ສຳລັບສ້າງສະຖິຕິເທົ່ານັ້ນ.






## ການສຳຫຼວດພົນລະເມືອງປີ 2020 ຈະງ່າຍກວ່າເກົ່າຫຼາຍ.

ໃນປີ 2020, ເຈົ້າຈະສາມາດຕື່ມແບບສອບຖາມທາງອອນລາຍ(online).




## ເຈົ້າສາມາດຊ່ວຍໄດ້.

ເຈົ້າແມ່ນຜູ້ຊ່ຽວຊານພວກເຮົາຕ້ອງການແນວຄວາມຄິດຂອງເຈົ້າກ່ຽວກັບວິທີການທີ່ດີທີ່ສຸດເພື່ອຮັບປະກັນວ່າທຸກຄົນຢູ່ໃນຊຸມຊົນຖືກຈົດນັບ.



United States Census Bureau

ຂໍ້ມູນເພື່ອຊ່ວຍສະໜັບສະໜູນການສຳຫຼວດພົນລະເມືອງ.ລັດຖະ ບານ/ຄູ່ຮ່ວມງານ

United States Census 2020